ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0229 /ອຄ.ຄພນ.

ນະຄອນຫຼວງວຽງຈັນ, ວັນທີ 12 FEB 2015

# ແຈ້ງການ

ເຖິງ: ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັສ.

ເລື່ອງ: ປັບລົງລາຄາຂາຍຍ່ອຍນ້ຳມັນແອັດຊັງ ແລະ ນ້ຳມັນກາຊວນໃນ ຂອບເຂດທົ່ວປະເທດ.

- ອີງຕາມ ແຈ້ງການ ຂອງຫ້ອງວ່າການລັດຖະບານ ເລກທີ 1519/ຫລບ.ກສສ, ລົງວັນທີ 29/102014.
- ອີງຕາມ ມາດຕາ 20 ຂອງກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່, ເລກທີ 05/ສພຊ, ລົງວັນທີ 20/12/2011.
- ອີງຕາມ ສະພາບລາຄາຊື້-ຂາຍນ້ຳມັນເຊື້ອໄຟຢູ່ຕະຫຼາດໂລກໃນປະຈຸບັນໄດ້ມີການປ່ຽນແປງ ແລະ ເພື່ອໃຫ້ສອດຄ່ອງກັບກົນໄກຕະຫຼາດ.

ກະຊວງອຸດສາຫະກຳ ແລະ ການຄ້າ, ຂໍແຈ້ງມາຍັງບັນດາບໍລິສັດນ້ຳມັນເຊື້ອໄຟ ໃຫ້ປັບລາຄາຂາຍຍ່ອຍນ້ຳມັນເຊື້ອໄຟໜ້າປໍ້າ ດັ່ງນີ້:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ລາຍການ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 9,600 | 8,380 | 7,380 |
| 2 | ແຂວງຄຳມ່ວນ | 9,640 | 8,410 | 7,400 |
| 3 | ແຂວງສະຫວັນນະເຂດ | 9,680 | 8,410 | 7,410 |
| 4 | ແຂວງຈຳປາສັກ | 9,700 | 8,430 | 7,430 |
| 5 | ແຂວງບໍ່ແກ້ວ | | 8,480 | 7,480 |
| 6 | ແຂວງຊຽງຂວາງ | | 8,610 | 7,600 |

- ລາຄາໃໝ່ນີ້ ໃຫ້ເລີ່ມປະຕິບັດ ວັນທີ 13/02/2015, ເວລາ 06 : 00 ໂມງ ໃນຂອບເຂດທົ່ວປະເທດ;
- ໃຫ້ບັນດາບໍລິສັດປະຕິບັດຕາມເນື້ອໃນ ຂ້າງເທິງນີ້ ຢ່າງເຂັ້ມງວດ ແລະ ຄຸ້ມຄອງປໍ້າຂາຍຍ່ອຍຂອງຕົນໃຫ້ບໍລິການຢ່າງເປັນປົກກະຕິ;
- ສ່ວນການຄິດໄລ່ເສັ່ງພາສີ, ອາກອນຊົມໃຊ້, ອາກອນມູນຄ່າເພີ່ມ(ອມພ), ກອງທຶນທາງ, ຄັງແຮ ແລະ ກຳໄລຈາກຄ່າບໍລິການປໍ້າຂາຍຍ່ອຍ ແມ່ນໃຫ້ພາກສ່ວນກ່ຽວຂ້ອງຄິດໄລ່ເກັບຕາມໂຄງສ້າງທີ່ໄດ້ກຳນົດໄວ້ໃນໂຄງສ້າງລາຄານ້ຳມັນເຊື້ອໄຟ

ຂອງຈຸດຕ່າງໆ ຕາມແຈ້ງການສະບັບນີ້ ຈົນກວ່າຈະມີການປ່ຽນແປງ;

- ແຈ້ງການສະບັບນີ້ ປ່ຽນແທນແຈ້ງການສະບັບເລກທີ 0138/ອຄ.ຄພນ, ລົງວັນທີ 28/01/2015.

* ໝາຍເຫດ:

ສ່ວນຈຸດອື່ນໆ ແມ່ນໃຫ້ຄິດໄລ່ຄ່າຂົນສົ່ງ ແລ້ວບວກເຂົ້າຄືປະຕິບັດຜ່ານມາຢ່າງເໝາະສົມແລ້ວໃຫ້ບໍລິສັດລາຍໃຫ້ກົມການຄ້າພາຍໃນຊາບດ້ວຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ລັດຖະມົນຕີວ່າການ ກະຊວງອຸດສາຫະກຳ ແລະ ການຄ້າ

ນ. ເຂັມມະນີ ພົນເສນາ

ບ່ອນສົ່ງ

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ)
- ຫ້ອງວ່າການລັດຖະບານ (ໃຊ້ຕາງລາຍງານ)
- ຫ້ອງການ ກະຊວງການເງິນ (ເພື່ອຊາບ)
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ)
- ກົມພາສີ, ກົມສ່ວຍສາອາກອນ ແລະ ກົມງົບປະມານ ກະຊວງການເງິນ

(ເພື່ອຊາບ ແລະ ໃຫ້ຄວາມຮ່ວມມື)

- ກອງທຶນບູລະນະທາງຫຼວງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ)
- ບັນດາກົມທີ່ກ່ຽວຂ້ອງອ້ອມຂ້າງກະຊວງ ອຄ (ເພື່ອຊາບ ແລະຕິດຕາມ)
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ທົ່ວປະເທດ (ເພື່ອຊາບ ແລະ ຕິດຕາມ)